ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ /ສພຊ

ນະຄອນຫຼວງວຽງຈັນ, ວັນທີ

# (ຮ່າງ)
# ກົດໝາຍ
# ວ່າດ້ວຍການປົກປ້ອງເງິນຝາກ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເຄື່ອນໄຫວ, ການຄຸ້ມຄອງ ແລະ ການຕິດຕາມ ກວດກາ ວຽກງານປົກປ້ອງເງິນຝາກ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມເຂັ້ມແຂງ, ທັນສະໄໝ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຝາກເງິນ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມ ຕໍ່ລະບົບສະຖາບັນການເງິນ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບທາງດ້ານການເງິນ ແລະ ພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ການປົກປ້ອງເງິນຝາກ**

ການປົກປ້ອງເງິນຝາກ ແມ່ນ ການຄ້ຳປະກັນເງິນຝາກ ແລະ ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຝາກເງິນ ທີ່ຝາກໄວ້ນຳສະມາຊິກ ດ້ວຍການສ້າງກົນໄກໃນການປົກປ້ອງເງິນຝາກ ແລະ ຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ ໃນກໍລະນີສະມາຊິກຕົກຢູ່ໃນສະພາວະລົ້ມລະລາຍ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເງິນຝາກ** ໝາຍເຖິງ ເງິນຂອງຜູ້ຝາກເງິນທີ່ໄດ້ຝາກໄວ້ນຳສະມາຊິກ ດ້ວຍການເປີດບັນຊີຕ່າງໆ ເປັນຕົ້ນ ບັນຊີເງິນຝາກກະແສລາຍວັນ, ບັນຊີເງິນຝາກປະຢັດ, ບັນຊີເງິນຝາກມີກຳນົດ, ບັນຊີເງິນຝາກປະຈຳວັນ, ບັນຊີຝາກຄຳ ແລະ ຜະລິດຕະພັນອື່ນທີ່ຄ້າຍຄືເງິນຝາກ ຕາມການກຳນົດຂອງ ທຫລ;
2. **ຜູ້ຝາກເງິນ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຝາກເງິນໄວ້ນຳສະມາຊິກ;
3. **ສະມາຊິກ** ໝາຍເຖິງ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນອື່ນທີ່ຮັບເງິນຝາກ ທີ່ສ້າງຕັ້ງຂຶ້ນ ຢ່າງຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ;
4. **ຜູ້ຖືຮຸ້ນລາຍໃຫຍ່** ໝາຍເຖິງ ຜູ້ຖືຮຸ້ນຂອງສະມາຊິກ ທີ່ຖືຮຸ້ນແຕ່ ສິບສ່ວນຮ້ອຍ ຂຶ້ນໄປ ຂອງຈຳນວນຮຸ້ນທັງໝົດ ທີ່ສາມາດລົງຄະແນນສຽງໄດ້;

5. ຜູ້ບໍລິຫານ ໝາຍເຖິງ ສະມາຊິກສະພາບໍລິຫານ, ສະມາຊິກຄະນະກຳມະການຂອງສະພາບໍລິຫານ, ຄະນະອຳນວຍການ, ຫົວໜ້າພະແນກ, ຫົວໜ້າສາຂາ, ຫົວໜ້າຝ່າຍ, ຄະນະສາຂາ ສຳລັບສາຂາທະນາຄານທຸລະກິດຕ່າງປະເທດ ຫຼື ທຽບເທົ່າຕຳແໜ່ງດັ່ງກ່າວ ຂອງສະມາຊິກ;

6. ເງິນຝາກຂອງສະຖາບັນການເງິນອື່ນ ໝາຍເຖິງ ເງິນຝາກຂອງສະຖາບັນການເງິນໃດໜຶ່ງ ທີ່ຝາກໄວ້ນຳສະມາຊິກ;

7. ເບ້ຍປະກັນເງິນຝາກ ໝາຍເຖິງ ຈຳນວນເງິນທີ່ສະມາຊິກ ຕ້ອງມອບໃຫ້ສຳນັກງານປົກປ້ອງເງິນຝາກ ຕາມອັດຕາເບ້ຍປະກັນເງິນຝາກ ທີ່ ທຫລ ກຳນົດ;

8. ຕາໜ່າງຄວາມປອດໄພດ້ານການເງິນ ໝາຍເຖິງ ກົນໄກການຮັກສາຄວາມໝັ້ນຄົງ ຂອງລະບົບສະຖາບັນການເງິນ ຊຶ່ງປະກອບດ້ວຍ ທຫລ, ກະຊວງການເງິນ, ສຳນັກງານປົກປ້ອງເງິນຝາກ, ນິຕິກຳ ແລະ ຂະບວນການຈັດຕັ້ງປະຕິບັດ ເພື່ອຊ່ວຍສ້າງຄວາມເຂັ້ມແຂງ ແລະ ຫຼຸດຜ່ອນຜົນກະທົບຈາກວິກິດການຂອງລະບົບການເງິນ;

9. ບັນຊີເງິນຝາກຮ່ວມ ໝາຍເຖິງ ບັນຊີເງິນຝາກທີ່ມີເຈົ້າຂອງບັນຊີ ນັບແຕ່ສອງຄົນຂຶ້ນໄປ;

10. ເງິນປົກປ້ອງ ໝາຍເຖິງ ຍອດເຫຼືອເງິນຝາກ ລວມທັງຕົ້ນທຶນ ແລະ ດອກເບ້ຍຄ້າງຈ່າຍ ທີ່ຍັງເຫຼືອໃນວັນສຸດທ້າຍຂອງການດຳເນີນທຸລະກິດຂອງສະມາຊິກ ຊຶ່ງສຳນັກງານປົກປ້ອງເງິນຝາກ ຕ້ອງຈ່າຍຄືນໃຫ້ຜູ້ຝາກເງິນ ຕາມວົງເງິນປົກປ້ອງສູງສຸດ ທີ່ ທຫລ ກຳນົດ;

11. ວັນສຸດທ້າຍຂອງການດຳເນີນທຸລະກິດ ໝາຍເຖິງ ວັນທີ່ ທຫລ ສັ່ງປິດກິດຈະການຂອງສະມາຊິກໃດໜຶ່ງ ແລະ ແຈ້ງໃຫ້ສຳນັກງານປົກປ້ອງເງິນຝາກ ຈ່າຍເງິນປົກປ້ອງ;

12. ສະພາວະລົ້ມລະລາຍ ໝາຍເຖິງ ສະພາບຂອງສະມາຊິກໃດໜຶ່ງ ທີ່ໄດ້ຜ່ານການນຳໃຊ້ມາດຕະການແກ້ໄຂ ໂດຍຄະນະຄວບຄຸມ ແຕ່ບໍ່ສາມາດແກ້ໄຂໄດ້ ຫຼື ຖືກຍຸບເລີກ ຕາມການແຈ້ງຂອງ ທຫລ ໃຫ້ ສປງ ຈ່າຍເງິນປົກປ້ອງ;

13. ຄະນະຄວບຄຸມ ໝາຍເຖິງ ຄະນະທີ່ໄດ້ຮັບການແຕ່ງຕັ້ງຈາກ ທຫລ ເພື່ອເຂົ້າຄວບຄຸມ ແລະ ດຳເນີນການແກ້ໄຂບັນຫາຂອງສະມາຊິກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

14. ອັດຕາສ່ວນຄັງເປົ້າໝາຍ ໝາຍເຖິງ ອັດຕາສ່ວນຄາດໝາຍຄວາມພຽງພໍຂອງຄັງປົກປ້ອງເງິນຝາກ ຕໍ່ເງິນຝາກທີ່ໄດ້ຮັບການປົກປ້ອງທັງໝົດ ເພື່ອຮັບປະກັນຄວາມສ່ຽງໃນການຈ່າຍເງິນປົກປ້ອງທີ່ອາດຈະເກີດຂຶ້ນ.

## ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານປົກປ້ອງເງິນຝາກ

ລັດ ຊຸກຍູ້ ແລະ ສົ່ງເສີມວຽກງານປົກປ້ອງເງິນຝາກ ດ້ວຍການວາງນະໂຍບາຍ, ກໍ່ສ້າງໂຄງລ່າງພື້ນຖານ, ສ້າງ, ບຳລຸງ ບຸກຄະລາກອນ ແລະ ວັດຖຸປະກອນທີ່ທັນສະໄໝ ຕາມຄວາມເໝາະສົມ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານປົກປ້ອງເງິນຝາກ ມີຄວາມເຂັ້ມແຂງ, ໝັ້ນຄົງ, ທັນສະໄໝ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ປະກອບສ່ວນ ແລະ ໃຫ້ການຮ່ວມມືໃນການເຄື່ອນໄຫວວຽກງານປົກປ້ອງເງິນຝາກ.

## ມາດຕາ 5 ຫຼັກການເຄື່ອນໄຫວວຽກງານປົກປ້ອງເງິນຝາກ

ການເຄື່ອນໄຫວວຽກງານປົກປ້ອງເງິນຝາກ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ແຜນພັດທະນາລະບົບສະຖາບັນການເງິນ-ເງິນຕາ;

2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ຮັບປະກັນການເຄື່ອນໄຫວວຽກງານ ໃຫ້ມີຄວາມເຂັ້ມແຂງ, ທັນສະໄໝ ແລະ ຍືນຍົງ;
4. ມີຄວາມສະເໝີພາບ, ຍຸຕິທຳ, ວ່ອງໄວ, ໂປ່ງໃສ ແລະ ສາມາດກວດສອບໄດ້;
5. ຮັບປະກັນ ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ຝາກເງິນ, ສະມາຊິກ ແລະ ລັດ;
6. ປະສານສົມທົບກັບບັນດາກະຊວງ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 6 ການປົກປ້ອງທາງດ້ານກົດໝາຍ**

ພະນັກງານ ແລະ ເຈົ້າໜ້າທີ່ ທີ່ເຄື່ອນໄຫວວຽກງານປົກປ້ອງເງິນຝາກ ແລະ ຜູ້ເຂົ້າຮ່ວມໃນວຽກງານດັ່ງກ່າວ ທີ່ກຳລັງປະຕິບັດໜ້າທີ່ ຫຼື ສິ້ນສຸດການເປັນພະນັກງານ ຊຶ່ງໄດ້ເຄື່ອນໄຫວວຽກງານປົກປ້ອງເງິນຝາກດ້ວຍຄວາມບໍລິສຸດໃຈ ຈະໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການຮ້ອງຟ້ອງທາງແພ່ງ ແລະ ອາຍາ, ການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ ແລະ ການສ້າງຄວາມເສຍຫາຍຕໍ່ ກຽດສັກສີ, ຊື່ສຽງ ຫຼືຊັບສິນສ່ວນຕົວ.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ສຳນັກງານປົກປ້ອງເງິນຝາກ, ສະມາຊິກ, ຜູ້ຝາກເງິນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ທີ່ກ່ຽວຂ້ອງກັບວຽກງານປົກປ້ອງເງິນຝາກ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປົກປ້ອງເງິນຝາກ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກວິຊາການ, ເຕັກໂນໂລຊີ ແລະ ການພັດທະນາບຸກຄະລາກອນ ເພື່ອພັດທະນາວຽກງານດັ່ງກ່າວ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະຕິບັດ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ພາກທີ II
## ການປົກປ້ອງເງິນຝາກ
### ໝວດທີ 1
### ເງິນຝາກທີ່ໄດ້ຮັບການປົກປ້ອງ ແລະ ບໍ່ໄດ້ຮັບການປົກປ້ອງ

**ມາດຕາ 9 ເງິນຝາກທີ່ໄດ້ຮັບການປົກປ້ອງ**

ເງິນຝາກທີ່ໄດ້ຮັບການປົກປ້ອງ ແມ່ນ ເງິນຝາກ ຂອງຜູ້ຝາກເງິນ ທີ່ເປັນຕົ້ນທຶນ ແລະ ດອກເບ້ຍຄ້າງຈ່າຍທີ່ຍັງເຫຼືອໃນວັນສຸດທ້າຍຂອງການດຳເນີນທຸລະກິດຂອງສະມາຊິກ ທີ່ເປັນສະກຸນເງິນກີບ ແລະ ສະກຸນເງິນຕາຕ່າງປະເທດ.

**ມາດຕາ 10 ເງິນຝາກທີ່ບໍ່ໄດ້ຮັບການປົກປ້ອງ**

ເງິນຝາກທີ່ບໍ່ໄດ້ຮັບການປົກປ້ອງ ແມ່ນ ເງິນຝາກ ຂອງຜູ້ຖືຮຸ້ນລາຍໃຫຍ່ ແລະ ຜູ້ບໍລິຫານ ຂອງສະມາຊິກ, ເງິນຝາກຂອງສະຖາບັນການເງິນອື່ນ, ເງິນຝາກຄັງເງິນແຫ່ງຊາດ, ເງິນຝາກຂອງອົງການຈັດຕັ້ງລັດ ແລະ ເງິນຝາກຂອງອົງການຈັດຕັ້ງສາກົນ.

## ໝວດທີ 2
## ເບ້ຍປະກັນເງິນຝາກ

**ມາດຕາ 11 ຮູບແບບ ແລະ ອັດຕາເບ້ຍປະກັນເງິນຝາກ**

ທຫລ ເປັນຜູ້ກຳນົດຮູບແບບ ແລະ ອັດຕາເບ້ຍປະກັນເງິນຝາກ ຕາມການສະເໜີຂອງສຳນັກງານປົກປ້ອງເງິນຝາກ. ອັດຕາເບ້ຍປະກັນເງິນຝາກສູງສຸດ ຕ້ອງບໍ່ເກີນ ໜຶ່ງສ່ວນຮ້ອຍ ຂອງຍອດເຫຼືອເງິນຝາກທີ່ໄດ້ຮັບການປົກປ້ອງທັງໝົດ ສະເລ່ຍ ຕໍ່ປີ.

**ມາດຕາ 12 ການຄິດໄລ່ ແລະ ມອບເບ້ຍປະກັນເງິນຝາກ**

ສະມາຊິກ ເປັນເຈົ້າການຄິດໄລ່ ແລະ ມອບເບ້ຍປະກັນເງິນຝາກ ເຂົ້າຄັງປົກປ້ອງເງິນຝາກ ເປັນສະກຸນເງິນກີບທຽບເທົ່າ.

ວິທີການຄິດໄລ່ ແລະ ຂັ້ນຕອນການມອບເບ້ຍປະກັນເງິນຝາກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 3
## ການຈ່າຍເງິນປົກປ້ອງ

**ມາດຕາ 13 ວົງເງິນປົກປ້ອງ**

ວົງເງິນປົກປ້ອງ ແມ່ນ ຈຳນວນເງິນປົກປ້ອງສູງສຸດ ທີ່ສຳນັກງານປົກປ້ອງເງິນຝາກ ຈ່າຍໃຫ້ຜູ້ຝາກເງິນທີ່ໄດ້ຮັບການປົກປ້ອງ ໜຶ່ງລາຍ ຕໍ່ ສະມາຊິກ ໜຶ່ງແຫ່ງ ຕາມການກຳນົດຂອງ ທຫລ ໃນແຕ່ລະໄລຍະ ໂດຍຮັບປະກັນໃຫ້ສາມາດປົກປ້ອງຜູ້ຝາກເງິນ ບໍ່ຫຼຸດ ເກົ້າສິບ ສ່ວນຮ້ອຍ (90%) ຂອງຜູ້ຝາກເງິນທີ່ໄດ້ຮັບການປົກປ້ອງທັງໝົດ.

**ມາດຕາ 14 ການຄິດໄລ່ເງິນປົກປ້ອງ**

ການຄິດໄລ່ເງິນປົກປ້ອງ ຕ້ອງຄິດໄລ່ລວມເອົາທຸກບັນຊີເງິນຝາກ ແລະ ທຸກສະກຸນເງິນ ຂອງຜູ້ຝາກເງິນທີ່ໄດ້ຮັບການປົກປ້ອງ ໜຶ່ງລາຍ ບໍ່ເກີນວົງເງິນປົກປ້ອງທີ່ໄດ້ກຳນົດໄວ້.

ຈຳນວນເງິນປົກປ້ອງ ທີ່ເປັນເງິນຕາຕ່າງປະເທດ ຕ້ອງຄິດໄລ່ເປັນສະກຸນເງິນກີບທຽບເທົ່າ ຕາມອັດຕາແລກປ່ຽນ (ອັດຕາຊື້) ທີ່ ທຫລ ກຳນົດ ໃນວັນສຸດທ້າຍຂອງການດຳເນີນທຸລະກິດ ຂອງສະມາຊິກທີ່ຕົກຢູ່ໃນສະພາວະລົ້ມລະລາຍ.

ຈຳນວນເງິນປົກປ້ອງ ສຳລັບບັນຊີເງິນຝາກຮ່ວມ ທີ່ບໍ່ໄດ້ກຳນົດສັດສ່ວນຈຳນວນເງິນຝາກໄວ້ຊັດເຈນຕ້ອງຫານສະເລ່ຍ ຕາມຈຳນວນເຈົ້າຂອງບັນຊີເງິນຝາກຕົວຈິງ ພ້ອມທັງນຳມາຄິດໄລ່ລວມກັບບັນຊີເງິນຝາກອື່ນ ຂອງຜູ້ຝາກເງິນດັ່ງກ່າວ ແຕ່ສູງສຸດບໍ່ເກີນວົງເງິນປົກປ້ອງສູງສຸດ ທີ່ກຳນົດໄວ້.

ຂັ້ນຕອນ ແລະ ວິທີການຄິດໄລ່ເງິນປົກປ້ອງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 15 ຂັ້ນຕອນໃນການຈ່າຍເງິນປົກປ້ອງ**

ການຈ່າຍເງິນປົກປ້ອງ ຕ້ອງດຳເນີນຕາມຂັ້ນຕອນ ດັ່ງນີ້:

1. ທຫລ ແຈ້ງເຖິງ ສຳນັກງານປົກປ້ອງເງິນຝາກ ເພື່ອດຳເນີນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ ຕາມລະບຽບການ ພ້ອມທັງສະໜອງຂໍ້ມູນເງິນຝາກ ແລະ ຂໍ້ມູນທີ່ກ່ຽວຂ້ອງ ໃນການຈ່າຍເງິນປົກປ້ອງໃຫ້ສຳນັກງານປົກປ້ອງເງິນຝາກ;

2. ພາຍຫຼັງໄດ້ຮັບຂໍ້ມູນ ຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ, ສຳນັກງານປົກປ້ອງເງິນຝາກ ຕ້ອງປະກາດໃຫ້ຜູ້ຝາກເງິນຊາບ ພາຍໃນເວລາ ຫ້າວັນ ລັດຖະການ ກ່ຽວກັບແຜນການຈ່າຍເງິນປົກປ້ອງ ພ້ອມທັງກຳນົດວັນເວລາ, ສະຖານທີ່ ແລະ ວິທີການຈ່າຍເງິນປົກປ້ອງ ຜ່ານສື່ຕ່າງໆ ຢ່າງໜ້ອຍ ສາມສິບວັນ ຕໍ່ເນື່ອງ;

3. ສຳນັກງານປົກປ້ອງເງິນຝາກ ຕ້ອງເລີ່ມຈ່າຍເງິນປົກປ້ອງ ພາຍໃນເວລາ ສິບສີ່ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບແຈ້ງຈາກ ທຫລ;

4. ຜູ້ຝາກເງິນ ຫຼື ຜູ້ມີສິດ ຕ້ອງປະກອບຄຳຮ້ອງ ພ້ອມທັງສະໜອງຂໍ້ມູນທີ່ຈຳເປັນ ໃນການດຳເນີນການຈ່າຍເງິນປົກປ້ອງ ຜ່ານຈຸດຮັບຄຳຮ້ອງ ຫຼື ຜ່ານທາງອອນລາຍ ຕາມການກຳນົດຂອງສຳນັກງານປົກປ້ອງເງິນຝາກ;

5. ພາຍຫຼັງ ສິບປີ ນັບແຕ່ວັນທີ່ສຳນັກງານປົກປ້ອງເງິນຝາກ ໄດ້ແຈ້ງໃຫ້ຜູ້ຝາກເງິນມາຍື່ນຄຳຮ້ອງຂໍຮັບເງິນປົກປ້ອງ, ຈຳນວນເງິນປົກປ້ອງ ທີ່ບໍ່ມີຜູ້ສະເໜີຮັບເອົາຕາມກຳນົດເວລາ ຕ້ອງມອບເຂົ້າໄວ້ໃນຄັງປົກປ້ອງເງິນຝາກ. ຜູ້ຝາກເງິນ ຫຼື ຜູ້ມີສິດ ບໍ່ສາມາດຍື່ນຄຳຮ້ອງຂໍຮັບເງິນປົກປ້ອງໃນຈຳນວນດັ່ງກ່າວໄດ້;

6. ສຳນັກງານປົກປ້ອງເງິນຝາກ ສາມາດດຳເນີນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນໂດຍກົງ, ມອບສິດໃຫ້ສະມາຊິກໃດໜຶ່ງ ເປັນຕົວແທນໃນການຈ່າຍເງິນປົກປ້ອງ ຫຼື ດຳເນີນການດ້ວຍວິທີການອື່ນທີ່ເໝາະສົມ.

ສຳລັບຍອດເຫຼືອເງິນຝາກທີ່ເກີນວົງເງິນປົກປ້ອງ ຈະໄລ່ລຽງຕາມບູລິມະສິດໃນການຊຳລະສະສາງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຂັ້ນຕອນ ແລະ ວິທີການຈ່າຍເງິນປົກປ້ອງລະອຽດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 16 ການຮຽກເກັບຄືນຊັບສິນ (Asset recoveries)**

ພາຍຫຼັງສານໄດ້ຕັດສິນປະກາດການລົ້ມລະລາຍຂອງສະມາຊິກ, ທຫລ ແຕ່ງຕັ້ງຄະນະຊຳລະສະສາງ ໂດຍມີຜູ້ຕາງໜ້າຈາກສຳນັກງານປົກປ້ອງເງິນຝາກ ເຂົ້າຮ່ວມເປັນຄະນະ.

ສຳນັກງານປົກປ້ອງເງິນຝາກ ເປັນເຈົ້າໜີ້ສະມາຊິກທີ່ລົ້ມລະລາຍ ແລະ ສາມາດຮຽກເກັບຄືນຊັບສິນ ຕາມຈຳນວນເງິນປົກປ້ອງທັງໝົດ ທີ່ຕ້ອງຈ່າຍໃຫ້ຜູ້ຝາກເງິນທີ່ໄດ້ຮັບການປົກປ້ອງ ຕາມລຳດັບບູລິມະສິດທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ພາກທີ III
## ສະມາຊິກ ຂອງສຳນັກງານປົກປ້ອງເງິນຝາກ

**ມາດຕາ 17 ການເຂົ້າເປັນສະມາຊິກ**

ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຕ້ອງເຂົ້າເປັນສະມາຊິກແບບບັງຄັບ ແລະ ສະເໜີຂໍເຂົ້າເປັນສະມາຊິກ ນຳສຳນັກງານປົກປ້ອງເງິນຝາກ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ.

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ກ່ອນກົດໝາຍສະບັບນີ້ມີຜົນສັກສິດ ຕ້ອງສະເໜີຂໍເຂົ້າເປັນສະມາຊິກ ນຳສຳນັກງານປົກປ້ອງເງິນຝາກ ຕາມການກຳນົດຂອງ ທຫລ ນັບແຕ່ວັນທີ່ກົດໝາຍສະບັບນີ້ມີຜົນສັກສິດ ເປັນຕົ້ນໄປ.

ສຳລັບການເຂົ້າເປັນສະມາຊິກ ຂອງສະຖາບັນການເງິນອື່ນທີ່ຮັບເງິນຝາກ ທີ່ສ້າງຕັ້ງຂຶ້ນ ຢ່າງຖືກຕ້ອງ ຕາມກົດໝາຍທີ່ກ່ຽວຂ້ອງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ຂັ້ນຕອນ ແລະ ວິທີການ ໃນການປະກອບເອກະສານສະເໜີຂໍເຂົ້າເປັນສະມາຊິກ ໄດ້ກຳນົດໄວ້ໃນ ລະບຽບການຕ່າງຫາກ.

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງສະມາຊິກ**

ສະມາຊິກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໄດ້ຮັບໃບຢັ້ງຢືນການເຂົ້າເປັນສະມາຊິກ ແລະ ສະແດງໃບຢັ້ງຢືນດັ່ງກ່າວ ຢູ່ສຳນັກງານຂອງຕົນ ໂດຍສະເພາະ ສະຖານທີ່ໃຫ້ບໍລິການດ້ານເງິນຝາກ ທີ່ຜູ້ຝາກເງິນສາມາດເຫັນລາຍລະອຽດໄດ້ຊັດເຈນ ແລະ ເຜີຍແຜ່ຜ່ານຊ່ອງທາງສື່ສານ ແລະ ສື່ເອເລັກໂຕນິກ ຂອງຕົນ;
2. ເປັນເຈົ້າການເຜີຍແຜ່ວຽກງານປົກປ້ອງເງິນຝາກ ໃຫ້ສັງຄົມໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງຖືກຕ້ອງ ຕາມການແນະນຳຂອງສຳນັກງານປົກປ້ອງເງິນຝາກ;
3. ລາຍງານຂໍ້ມູນ ຕາມແບບພິມທີ່ສຳນັກງານປົກປ້ອງເງິນຝາກ ກຳນົດ ແລະ ສະໜອງຂໍ້ມູນທີ່ຕິດ ພັນກັບວຽກງານປົກປ້ອງເງິນຝາກ ຕາມການຮຽກຮ້ອງຂອງສຳນັກງານປົກປ້ອງເງິນຝາກ;
4. ມອບເບ້ຍປະກັນເງິນຝາກ ຕາມລະບຽບການ;
5. ໃຫ້ການຮ່ວມມືກັບສຳນັກງານປົກປ້ອງເງິນຝາກ ໃນການຈັດຕັ້ງວຽກງານປົກປ້ອງເງິນຝາກ;
6. ນຳໃຊ້ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 19 ການສິ້ນສຸດການເປັນສະມາຊິກ**

ການເປັນສະມາຊິກ ຈະສິ້ນສຸດທັນທີ ໃນກໍລະນີຖືກຖອນໃບອະນຸຍາດດຳເນີນທຸລະກິດຈາກ ທຫລ.

## ພາກທີ IV
## ສຳນັກງານປົກປ້ອງເງິນຝາກ
### ໝວດທີ 1
### ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສຳນັກງານປົກປ້ອງເງິນຝາກ

**ມາດຕາ 20 ທີ່ຕັ້ງ ຂອງສຳນັກງານປົກປ້ອງເງິນຝາກ**

ສຳນັກງານປົກປ້ອງເງິນຝາກ ຂຽນຫຍໍ້ວ່າ "ສປງ" ແມ່ນ ການຈັດຕັ້ງຂອງລັດ ທີ່ຂຶ້ນກັບ ທຫລ, ມີ ຖານະເປັນນິຕິບຸກຄົນ, ເປັນຫົວໜ່ວຍການເງິນສະເພາະ ແລະ ເຄື່ອນໄຫວໂດຍບໍ່ສະແຫວງຫາຜົນກຳໄລ.

**ມາດຕາ 21 ພາລະບົດບາດ ຂອງສຳນັກງານປົກປ້ອງເງິນຝາກ**

ສຳນັກງານປົກປ້ອງເງິນຝາກ ມີພາລະບົດບາດເປັນເສນາທິການໃຫ້ແກ່ ທຫລ ໃນການຈັດຕັ້ງປະຕິບັດ ວຽກງານປົກປ້ອງເງິນຝາກ ໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ ເພື່ອປະກອບສ່ວນເຂົ້າໃນການຮັກສາ ສະຖຽນລະພາບຂອງລະບົບສະຖາບັນການເງິນ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງສຳນັກງານປົກປ້ອງເງິນຝາກ**

ສຳນັກງານປົກປ້ອງເງິນຝາກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ, ສ້າງແຜນຍຸດທະສາດ ແລະ ນິຕິກຳ ກ່ຽວກັບວຽກງານປົກປ້ອງເງິນຝາກ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ໂຄສະນາ ເຜີຍແຜ່ ບັນດານິຕິກຳ ແລະ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານປົກປ້ອງເງິນຝາກ ໃຫ້ ບັນດາສະມາຊິກ ແລະ ສັງຄົມ ຊາບ;

3. ຄິດໄລ່ ແລະ ເກັບເບ້ຍປະກັນເງິນຝາກຈາກສະມາຊິກ;

4. ຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ ຕາມວົງເງິນປົກປ້ອງ ທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

5. ຮຽກເກັບຄືນຊັບສິນ ໃນຂະບວນການຊຳລະສະສາງ;

6. ຕິດຕາມ ແລະ ວິເຄາະ ສະພາບການເຄື່ອນໄຫວຂອງສະມາຊິກ ພ້ອມທັງສະເໜີໃຫ້ ທຫລ ນຳໃຊ້ ມາດຕະການ ຕໍ່ສະມາຊິກທີ່ລະເມີດກົດໝາຍ ແລະ ລະບຽບການ;

7. ລົງກວດກາກັບທີ່ ກ່ຽວກັບການຈັດຕັ້ງປະຕິບັດວຽກງານປົກປ້ອງເງິນຝາກ ຂອງສະມາຊິກ;

8. ຮຽກເອົາຂໍ້ມູນທີ່ກ່ຽວຂ້ອງກັບວຽກງານປົກປ້ອງເງິນຝາກ ຈາກສະມາຊິກ;

9. ບໍລິຫານທຶນສ້າງຕັ້ງ ແລະ ຄັງປົກປ້ອງເງິນຝາກ ໃນຊັບສິນທີ່ມີຄວາມສ່ຽງຕ່ຳ ເປັນຕົ້ນ ຊື້ ພັນທະບັດ ຂອງລັດຖະບານ, ພັນທະບັດຂອງທະນາຄານກາງ;

10. ສະເໜີກູ້ຢືມເງິນຈາກ ສະຖາບັນການເງິນທັງພາຍໃນ ແລະ ຕ່າງປະເທດ ໂດຍລັດຖະບານເປັນ ຜູ້ຄ້ຳປະກັນ ຕາມການສະເໜີຂອງ ທຫລ;

11. ສະເໜີກູ້ຢືມເງິນຈາກ ທຫລ ເພື່ອໃຫ້ກູ້ຢືມເປັນແຫຼ່ງສຸດທ້າຍ ແລະ/ຫຼື ຂໍການສະໜັບສະໜູນທຶນ ສຳຮອງ (Back-up Funding) ຈາກກະຊວງການເງິນ ໃນກໍລະນີຄັງປົກປ້ອງເງິນຝາກບໍ່ພຽງພໍ ໃນການຈ່າຍ ເງິນປົກປ້ອງ;

12. ສ້າງແຜນການບໍລິຫານຄວາມຕໍ່ເນື່ອງ ໃນການເຄື່ອນໄຫວວຽກງານທີ່ມີປະສິດທິພາບ ແລະ ທົບ ທວນຄືນໃນແຕ່ລະໄລຍະ;

13. ສ້າງແຜນ, ຈຳລອງເຫດການ ຮັບມືກັບສະພາວະລົ້ມລະລາຍຂອງສະມາຊິກ ແລະ ທົບທວນຜົນ ຂອງການຈຳລອງດັ່ງກ່າວ ຢ່າງໜ້ອຍ ໜຶ່ງຄັ້ງ ຕໍ່ປີ;

14. ອອກ ຫຼື ຖອນ ໃບຢັ້ງຢືນການເປັນສະມາຊິກ;

15. ນຳໃຊ້ມາດຕະການຕໍ່ສະມາຊິກ ທີ່ລະເມີດກົດໝາຍສະບັບນີ້;

16. ເຂົ້າຮ່ວມໃນການຄວບຄຸມ ເພື່ອແກ້ໄຂບັນຫາຂອງສະມາຊິກ ຕາມການມອບໝາຍຂອງ ທຫລ ແລະ ກະກຽມຄວາມພ້ອມໃນການຈ່າຍເງິນປົກປ້ອງ;

17. ແລກປ່ຽນຂໍ້ມູນ ຂ່າວສານ ແລະ ປະສານສົມທົບກັບ ທຫລ, ກະຊວງການເງິນ ແລະ ພາກສ່ວນທີ່ ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປົກປ້ອງເງິນຝາກ;

18. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານປົກປ້ອງເງິນຝາກ ໃຫ້ ທຫລ ຢ່າງເປັນປົກກະຕິ;

19. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ໂຄງປະກອບການຈັດຕັ້ງ ຂອງສຳນັກງານປົກປ້ອງເງິນຝາກ

**ມາດຕາ 23 ໂຄງປະກອບການຈັດຕັ້ງ ຂອງສຳນັກງານປົກປ້ອງເງິນຝາກ**

ສຳນັກງານປົກປ້ອງເງິນຝາກ ມີໂຄງປະກອບການຈັດຕັ້ງ ດັ່ງນີ້:

1. ສະພາບໍລິຫານ;
2. ຄະນະກຳມະການ;
3. ຫົວໜ້າ ແລະ ຮອງຫົວໜ້າ ສຳນັກງານປົກປ້ອງເງິນຝາກ;
4. ກົງຈັກຊ່ວຍວຽກ ແລະ ພະນັກງານ.

**ມາດຕາ 24 ສະພາບໍລິຫານ**

ສະພາບໍລິຫານ ແມ່ນ ການຈັດຕັ້ງບໍລິຫານສູງສຸດ ຂອງສຳນັກງານປົກປ້ອງເງິນຝາກ.

ສະມາຊິກສະພາບໍລິຫານ ມີອາຍຸການ ຫ້າປີ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຜູ້ວ່າການ ທຫລ.

**ມາດຕາ 25 ໂຄງປະກອບຂອງສະພາບໍລິຫານ**

ສະພາບໍລິຫານ ປະກອບດ້ວຍ ສະມາຊິກ ແຕ່ ເຈັດ ຫາ ເກົ້າ ຄົນ ໃນນັ້ນມີ:

1. ຮອງຜູ້ວ່າການ ທຫລ ເປັນປະທານ;
2. ຫົວໜ້າກົມ ກະຊວງການເງິນ ເປັນຮອງປະທານ;
3. ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ, ທຫລ ເປັນກຳມະການ;
4. ຫົວໜ້າກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ທຫລ ເປັນກຳມະການ;
5. ຫົວໜ້າສຳນັກງານປົກປ້ອງເງິນຝາກ ເປັນກຳມະການ ແລະ ຜູ້ປະຈຳການ;
6. ຕົວແທນຈາກພາກສ່ວນອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ຂົງເຂດ ເສດຖະກິດ, ຍຸຕິທຳ, ສະຖາບັນຄົ້ນຄວ້າ ເສດຖະກິດ, ສະຖາບັນການສຶກສາ ເປັນກຳມະການ.

**ມາດຕາ 26 ມາດຕະຖານ ແລະ ເງື່ອນໄຂ ຂອງສະມາຊິກສະພາບໍລິຫານ**

ສະມາຊິກສະພາບໍລິຫານ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດ ແລະ ປະສົບການ ໃນຂົງເຂດໃດໜຶ່ງ ເປັນຕົ້ນ ການເງິນ, ການທະນາຄານ, ການບັນຊີ, ກົດໝາຍ;
2. ບໍ່ເປັນຄະນະອຳນວຍການ ຂອງສະຖາບັນການເງິນໃດໜຶ່ງ;
3. ມີ ຜົວ ຫຼື ເມຍ, ພໍ່, ແມ່, ລູກ ທີ່ບໍ່ແມ່ນຜູ້ຖືຮຸ້ນລາຍໃຫຍ່ ຫຼື ຜູ້ມີສິດຜົນປະໂຫຍດສຳຄັນ ໃນສະຖາບັນການເງິນໃດໜຶ່ງ;
4. ບໍ່ເຄີຍເປັນຜູ້ບໍລິຫານໃນວິສາຫະກິດ ທີ່ຖືກສານຕັດສິນໃຫ້ລົ້ມລະລາຍ;
5. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານ ລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ສໍ້ລາດບັງຫຼວງ, ຟອກເງິນ ຫຼື ການກະທຳຜິດອື່ນ ໂດຍເຈດຕະນາ.

### ມາດຕາ 27 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ

ສະພາບໍລິຫານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງເອົາ ແຜນຍຸດທະສາດ, ແຜນການ ຫ້າ ປີ, ແຜນການປະຈຳປີ ແລະ ບົດລາຍງານປະຈຳປີ ຂອງສຳນັກງານປົກປ້ອງເງິນຝາກ;
2. ຮັບຮອງເອົາ ນິຕິກຳທີ່ກ່ຽວຂ້ອງກັບວຽກງານປົກປ້ອງເງິນຝາກ ຕາມຂອບເຂດສິດຂອງຕົນ;
3. ຮັບຮອງເອົາ ແຜນງົບປະມານປະຈຳປີ ແລະ ການດັດແກ້ແຜນງົບປະມານ ຂອງສຳນັກງານປົກປ້ອງເງິນຝາກ;
4. ບໍລິຫານ ແລະ ຈັດແບ່ງຜົນໄດ້ຮັບສຸດທິປະຈຳປີຂອງ ສຳນັກງານປົກປ້ອງເງິນຝາກ;
5. ກຳນົດອັດຕາສ່ວນຄັງເປົ້າໝາຍ ແລະ ຮັບຮອງນະໂຍບາຍກ່ຽວກັບການບໍລິຫານທຶນສ້າງຕັ້ງ ແລະ ຄັງປົກປ້ອງເງິນຝາກ ຂອງສຳນັກງານປົກປ້ອງເງິນຝາກ;
6. ຮັບຮອງເອົາ ເງິນເດືອນ, ເງິນແຮງງານ, ນະໂຍບາຍອຸດໜູນ ແລະ ສະຫວັດດີການ ຂອງພະນັກງານ ສຳນັກງານປົກປ້ອງເງິນຝາກ ຕາມການສະເໜີຂອງຫົວໜ້າສຳນັກງານປົກປ້ອງເງິນຝາກ;
7. ແຕ່ງຕັ້ງຄະນະກຳມະການຂອງສະພາບໍລິຫານ;
8. ສະເໜີ ຜູ້ວ່າການ ທຫລ ພິຈາລະນາແຕ່ງຕັ້ງຮອງຫົວໜ້າສຳນັກງານປົກປ້ອງເງິນຝາກ;
9. ສະເໜີ ໂຄງປະກອບກົງຈັກຊ່ວຍວຽກ ຂອງສຳນັກງານປົກປ້ອງເງິນຝາກ ຕໍ່ຜູ້ວ່າການ ທຫລ ເພື່ອ ສະເໜີນາຍົກລັດຖະມົນຕີ ພິຈາລະນາ;
10. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ບຸກຄະລາກອນໃນກົງຈັກຊ່ວຍວຽກ ຂອງສຳນັກງານປົກປ້ອງເງິນຝາກ ຕາມການເຫັນດີຂອງ ຜູ້ວ່າການ ທຫລ;
11. ຮັບຮອງແຜນກຳນົດຕຳແໜ່ງງານ ແລະ ຄວາມຕ້ອງການພະນັກງານ ຕາມການສະເໜີຂອງ ຫົວໜ້າສຳນັກງານປົກປ້ອງເງິນຝາກ;
12. ຊີ້ນຳ, ຄຸ້ມຄອງ ແລະ ຕິດຕາມ ກວດກາການບໍລິຫານວຽກງານ ຂອງສຳນັກງານປົກປ້ອງເງິນຝາກ;
13. ລາຍງານການເຄື່ອນໄຫວຂອງຕົນໂດຍກົງ ຕໍ່ ທຫລ ຢ່າງເປັນປົກກະຕິ;
14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 28 ກອງປະຊຸມສະພາບໍລິຫານ

ສະພາບໍລິຫານ ເຄື່ອນໄຫວວຽກງານຕາມລະບອບປະຊຸມ. ກອງປະຊຸມສະພາບໍລິຫານ ປະກອບດ້ວຍ ກອງປະຊຸມສາມັນ ແລະ ວິສາມັນ.

ກອງປະຊຸມສາມັນ ຈັດຂຶ້ນຢ່າງໜ້ອຍ ສອງຄັ້ງ ຕໍ່ປີ ຕາມການຮຽກໂຮມຂອງປະທານ. ວາລະກອງປະຊຸມ ຕ້ອງແຈ້ງໃຫ້ສະມາຊິກສະພາບໍລິຫານລ່ວງໜ້າ ເປັນລາຍລັກອັກສອນ ຢ່າງໜ້ອຍ ຫ້າວັນ ກ່ອນວັນເປີດກອງປະຊຸມ.

ໃນກໍລະນີຈຳເປັນ ແລະ ຮີບດ່ວນ ກໍສາມາດຈັດກອງປະຊຸມວິສາມັນເວລາໃດກໍໄດ້ ຕາມການຮຽກໂຮມຂອງປະທານ ຫຼື ຕາມການສະເໜີຂອງສະມາຊິກສະພາບໍລິຫານ ຢ່າງໜ້ອຍ ສາມ ຄົນ.

ກອງປະຊຸມສະພາບໍລິຫານ ຈະເປີດຂຶ້ນໄດ້ ກໍຕໍ່ເມື່ອມີສະມາຊິກສະພາບໍລິຫານເຂົ້າຮ່ວມ ຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກທັງໝົດ.

ກອງປະຊຸມສະພາບໍລິຫານ ຕົກລົງບັນຫາດ້ວຍການອອກເປັນມະຕິ ໂດຍຖືເອົາສຽງສ່ວນຫຼາຍຂອງສະມາຊິກທີ່ເຂົ້າຮ່ວມກອງປະຊຸມ. ໃນກໍລະນີຫາກມີສຽງເທົ່າກັນ ສຽງຂອງປະທານເປັນອັນຕັດສິນ.

**ມາດຕາ 29 ການສິ້ນສຸດການເປັນສະມາຊິກສະພາບໍລິຫານ**

ການເປັນສະມາຊິກສະພາບໍລິຫານ ຈະສິ້ນສຸດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ໝົດອາຍຸການ;
2. ລາອອກ ໂດຍໄດ້ຮັບອະນຸຍາດຈາກນາຍົກລັດຖະມົນຕີ;
3. ຖືກຍົກຍ້າຍ, ປົດຕຳແໜ່ງ ຫຼື ບໍ່ໄດ້ຮັບຜິດຊອບວຽກງານທີ່ກ່ຽວຂ້ອງ;
4. ປະຕິບັດບໍ່ຖືກ ມາດຕະຖານ ແລະ ເງື່ອນໄຂ ໃດໜຶ່ງ ທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້;
5. ເສຍຊີວິດ.

ໃນກໍລະນີຈຳນວນສະມາຊິກສະພາບໍລິຫານ ຫາກວ່າງລົງ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 2 ຫາ ຂໍ້ 5 ຂອງມາດຕານີ້ ຜູ້ວ່າການ ທຫລ ຕ້ອງສະເໜີນາຍົກລັດຖະມົນຕີ ແຕ່ງຕັ້ງຜູ້ໃໝ່ແທນ.

**ມາດຕາ 30 ຄະນະກຳມະການ**

ຄະນະກຳມະການ ຂອງສະພາບໍລິຫານ ປະກອບດ້ວຍ:

1. ຄະນະກຳມະການຄຸ້ມຄອງບໍລິຫານ;
2. ຄະນະກຳມະການບໍລິຫານທຶນ ແລະ ຄວາມສ່ຽງ;
3. ຄະນະກຳມະການກວດກາ;
4. ຄະນະກຳມະການອື່ນ ຕາມຄວາມຈຳເປັນຂອງວຽກງານ.

ສຳລັບ ສິດ ແລະ ໜ້າທີ່ ຂອງແຕ່ລະຄະນະກຳມະການ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 31 ໂຄງປະກອບຄະນະກຳມະການ**

ແຕ່ລະຄະນະກຳມະການ ປະກອບດ້ວຍ ສະມາຊິກສະພາບໍລິຫານ ຢ່າງໜ້ອຍ ສາມ ຄົນ ທີ່ມີຄຸນວຸດທິ ແລະ ປະສົບການທີ່ເໝາະສົມ. ໃນນັ້ນມີ ປະທານ ແລະ ຄະນະກຳມະການ. ສະເພາະສະມາຊິກສະພາບໍລິຫານຜູ້ໜຶ່ງ ສາມາດສັງກັດຢູ່ຫຼາຍຄະນະກຳມະການໄດ້ ແຕ່ສາມາດເປັນປະທານໄດ້ພຽງໜຶ່ງຄະນະກຳມະການເທົ່ານັ້ນ. ປະທານຄະນະກຳມະການກວດກາ ຕ້ອງເປັນສະມາຊິກສະພາບໍລິຫານທີ່ມາຈາກພາກສ່ວນອື່ນ. ປະທານສະພາບໍລິຫານ ເປັນຜູ້ແຕ່ງຕັ້ງບຸກຄະລາກອນພາຍນອກ ຊຶ່ງບໍ່ແມ່ນສະມາຊິກສະພາບໍລິຫານ ມາປະກອບເພີ່ມເຕີມໃນແຕ່ລະຄະນະກຳມະການໄດ້.

**ມາດຕາ 32 ມາດຕະຖານ ແລະ ເງື່ອນໄຂ ຂອງຄະນະກຳມະການ**

ສະມາຊິກຄະນະກຳມະການ ມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດ ແລະ ປະສົບການ ໃນຂົງເຂດໃດໜຶ່ງ;
2. ມີທັດສະນະຫຼັກໝັ້ນ, ປອດໃສ ແລະ ຮັກສາຄວາມລັບ ກ່ຽວກັບວຽກງານທີ່ຕົນຮັບຜິດຊອບ;
3. ບໍ່ເຄີຍເປັນຜູ້ບໍລິຫານໃນວິສາຫະກິດ ທີ່ຖືກສານຕັດສິນໃຫ້ລົ້ມລະລາຍ;
4. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານ ລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ສໍ້ລາດບັງຫຼວງ, ຟອກເງິນ ຫຼື ການກະທຳຜິດອື່ນ ໂດຍເຈດຕະນາ;
5. ແຈ້ງຊັບສິນຕາມກົດໝາຍ;
6. ມີມາດຕະຖານ ແລະ ເງື່ອນໄຂອື່ນ ຕາມການກຳນົດຂອງປະທານສະພາບໍລິຫານ.

**ມາດຕາ 33 ອາຍຸການຂອງສະມາຊິກຄະນະກຳມະການ**

ສະມາຊິກຄະນະກຳມະການ ມີອາຍຸການ ຫ້າ ປີ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້ ຕາມການສະເໜີຂອງປະທານສະພາບໍລິຫານ.

**ມາດຕາ 34 ກອງປະຊຸມຄະນະກຳມະການ**

ຄະນະກຳມະການຂອງສະພາບໍລິຫານ ເຄື່ອນໄຫວວຽກງານຕາມລະບອບປະຊຸມ ຊຶ່ງຈັດຂຶ້ນຢ່າງໜ້ອຍ ສອງຄັ້ງ ຕໍ່ປີ ກ່ອນການເປີດກອງປະຊຸມສະພາບໍລິຫານ ໃນແຕ່ລະຄັ້ງ.

**ມາດຕາ 35 ການສິ້ນສຸດການເປັນສະມາຊິກຄະນະກຳມະການ**

ການເປັນສະມາຊິກຄະນະກຳມະການ ຈະສິ້ນສຸດໃນກໍລະນີໃດໜຶ່ງ ດັ່ງນີ້:

1. ໝົດອາຍຸການ;
2. ລາອອກ ໂດຍໄດ້ຮັບອະນຸຍາດຈາກຜູ້ມີສິດແຕ່ງຕັ້ງ ແລະ ປົດຕຳແໜ່ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;
3. ຖືກຍົກຍ້າຍ, ປົດຕຳແໜ່ງ ຫຼື ບໍ່ໄດ້ຮັບຜິດຊອບວຽກງານທີ່ກ່ຽວຂ້ອງ;
4. ປະຕິບັດບໍ່ຖືກ ມາດຕະຖານ ແລະ ເງື່ອນໄຂ ໃດໜຶ່ງ ທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງກົດໝາຍສະບັບນີ້;
5. ເສຍຊີວິດ.

ໃນກໍລະນີຕຳແໜ່ງໃດໜຶ່ງ ຂອງຄະນະກຳມະການ ຫາກວ່າງລົງ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 2 ຫາ ຂໍ້ 5 ຂອງມາດຕານີ້ ຫົວໜ້າສຳນັກງານປົກປ້ອງເງິນຝາກ ຕ້ອງສະເໜີປະທານສະພາບໍລິຫານ ແຕ່ງຕັ້ງຜູ້ໃໝ່ແທນ.

**ມາດຕາ 36 ຫົວໜ້າສຳນັກງານປົກປ້ອງເງິນຝາກ**

ຫົວໜ້າສຳນັກງານປົກປ້ອງເງິນຝາກ ເປັນຜູ້ຊີ້ນຳ, ນຳພາ ການບໍລິຫານວຽກງານຮອບດ້ານຂອງສຳນັກງານປົກປ້ອງເງິນຝາກ ຊຶ່ງມີຕຳແໜ່ງທຽບເທົ່າຫົວໜ້າກົມ ຖືກແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຜູ້ວ່າການ ທຫລ.

**ມາດຕາ 37 ສິດ ແລະ ໜ້າທີ່ ຂອງຫົວໜ້າສຳນັກງານ**

ຫົວໜ້າສຳນັກງານປົກປ້ອງເງິນຝາກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຜິດຊອບຕໍ່ ສະພາບໍລິຫານ ແລະ ທຫລ ໃນການຈັດຕັ້ງ ແລະ ການເຄື່ອນໄຫວ ວຽກງານຮອບດ້ານ ຂອງສຳນັກງານປົກປ້ອງເງິນຝາກ;
2. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມສະພາບໍລິຫານ;
3. ສ້າງ ຫຼື ດັດແກ້ ແຜນຍຸດທະສາດ, ແຜນການ ຫ້າ ປີ, ແຜນການປະຈຳປີ ແລະ ບົດລາຍງານປະຈຳປີ ເພື່ອສະເໜີສະພາບໍລິຫານ ພິຈາລະນາຮັບຮອງ;
4. ສະເໜີສ້າງນິຕິກຳ ກ່ຽວກັບວຽກງານປົກປ້ອງເງິນຝາກ ຕໍ່ຂັ້ນເທິງ;
5. ສ້າງ ແລະ ຍົກເລີກ ນິຕິກຳ ກ່ຽວກັບວຽກງານປົກປ້ອງເງິນຝາກ ຕາມຂອບເຂດສິດຂອງຕົນ;
6. ຄົ້ນຄວ້ານະໂຍບາຍກ່ຽວກັບການບໍລິຫານທຶນ ຂອງສຳນັກງານປົກປ້ອງເງິນຝາກ ເພື່ອສະເໜີສະພາບໍລິຫານ ພິຈາລະນາຮັບຮອງ;

7. ບໍລິຫານວຽກງານປະຈໍາວັນ ຂອງສໍານັກງານປົກປ້ອງເງິນຝາກ ຕາມຂອບເຂດສິດ ແລະ ໜ້າທີ່ ທີ່ໄດ້ກໍານົດໄວ້ໃນກົດລະບຽບພາຍໃນ ຫຼື ຕາມການມອບໝາຍຂອງສະພາບໍລິຫານ;

8. ເປັນຕົວແທນໃນການເຊັນສັນຍາ ແລະ ເອກະສານທາງການຕ່າງໆ ຂອງສໍານັກງານປົກປ້ອງເງິນຝາກ;

9. ຄົ້ນຄວ້າກ່ຽວກັບການຍ້ອງຍໍ ຫຼື ລົງວິໄນ ຕໍ່ພະນັກງານ ຂອງສໍານັກງານປົກປ້ອງເງິນຝາກ;

10. ສະໜອງຂໍ້ມູນ ແລະ ຊີ້ແຈງບັນຫາ ຕໍ່ສະພາບໍລິຫານ ແລະ ຜູ້ກວດສອບພາຍນອກ;

11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 38 ຮອງຫົວໜ້າສໍານັກງານປົກປ້ອງເງິນຝາກ**

ສໍານັກງານປົກປ້ອງເງິນຝາກ ປະກອບດ້ວຍ ຮອງຫົວໜ້າສໍານັກງານປົກປ້ອງເງິນຝາກ ຈໍານວນໜຶ່ງ ຊຶ່ງມີຕໍາແໜ່ງທຽບເທົ່າຮອງຫົວໜ້າກົມ ຖືກແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕໍາແໜ່ງ ໂດຍຜູ້ວ່າການ ທຫລ ຕາມການສະເໜີຂອງປະທານສະພາບໍລິຫານ.

ຮອງຫົວໜ້າສໍານັກງານປົກປ້ອງເງິນຝາກ ມີໜ້າທີ່ຊ່ວຍຫົວໜ້າສໍານັກງານປົກປ້ອງເງິນຝາກ ໃນການຊີ້ນໍາ, ນໍາພາ, ລົງເລິກວຽກງານຈໍານວນໜຶ່ງ ຕາມການມອບໝາຍຂອງຫົວໜ້າສໍານັກງານປົກປ້ອງເງິນຝາກ ແລະ ທັງເປັນຜູ້ຮັກສາການແທນ ໃນກໍລະນີຫົວໜ້າສໍານັກງານປົກປ້ອງເງິນຝາກ ຕິດຂັດ ແລະ ບໍ່ສາມາດປະຕິບັດໜ້າທີ່ໄດ້ ຕາມການມອບໝາຍຂອງຫົວໜ້າສໍານັກງານປົກປ້ອງເງິນຝາກ.

**ມາດຕາ 39 ກົງຈັກຊ່ວຍວຽກ**

ສໍານັກງານປົກປ້ອງເງິນຝາກ ມີກົງຈັກຊ່ວຍວຽກ ຈໍານວນໜຶ່ງ ຕາມການຕົກລົງຂອງນາຍົກລັດຖະ ມົນຕີ. ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົງຈັກຊ່ວຍວຽກ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 40 ພະນັກງານ ຂອງສໍານັກງານປົກປ້ອງເງິນຝາກ**

ພະນັກງານ ຂອງສໍານັກງານປົກປ້ອງເງິນຝາກ ມີຖານະເປັນພະນັກງານ-ລັດຖະກອນ ແລະ ພາລະກອນເຄື່ອນໄຫວວຽກງານ, ນໍາໃຊ້ສິດ ແລະ ປະຕິບັດ ໜ້າທີ່, ພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 3
## ການເງິນ ແລະ ການບັນຊີ ຂອງສໍານັກງານປົກປ້ອງເງິນຝາກ

**ມາດຕາ 41 ການເງິນ**

ສໍານັກງານປົກປ້ອງເງິນຝາກ ມີຄວາມເປັນເອກະລາດທາງດ້ານການເງິນ ແລະ ມີສາລະບານບັນຊີຕ່າງຫາກ. ການເງິນ ຂອງສໍານັກງານປົກປ້ອງເງິນຝາກ ປະກອບດ້ວຍ ຊັບສິນ, ໜີ້ສິນ, ທຶນ ແລະ ງົບປະມານ.

**ມາດຕາ 42 ຊັບສິນ**

ຊັບສິນ ຂອງສໍານັກງານປົກປ້ອງເງິນຝາກ ແມ່ນ ຊັບສິນບັດທີ່ເປັນສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ຊຶ່ງປະກອບດ້ວຍ ເງິນສົດ ແລະ ເງິນຝາກ, ເງິນໃຫ້ກູ້ຢືມ, ພັນທະບັດ, ຊັບຄົງທີ່ ແລະ ຊັບສິນອື່ນ.

ສຳນັກງານປົກປ້ອງເງິນຝາກ ຕ້ອງຄຸ້ມຄອງຊັບສິນຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເປັນຕົ້ນ ການຂຶ້ນບັນຊີ, ການຂຶ້ນທະບຽນ, ການຈັດສັນ, ການຈັດຊື້-ຈັດຈ້າງ, ການປົກປັກຮັກສາ, ການສະສາງ ແລະ ການຕິດຕາມ ກວດກາ ຊັບສິນ.

### ມາດຕາ 43 ໜີ້ສິນ

ໜີ້ສິນ ຂອງສຳນັກງານປົກປ້ອງເງິນຝາກ ປະກອບດ້ວຍ ເງິນກູ້ຢືມຈາກ ກະຊວງການເງິນ, ທຫລ, ສະຖາບັນການເງິນອື່ນ ທັງພາຍໃນ ແລະຕ່າງປະເທດ ແລະ ໜີ້ສິນອື່ນ.

ສຳນັກງານປົກປ້ອງເງິນຝາກ ຕ້ອງຄຸ້ມຄອງໜີ້ສິນຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 44 ທຶນ

ທຶນ ຂອງສຳນັກງານປົກປ້ອງເງິນຝາກ ປະກອບດ້ວຍ:

1. ທຶນສ້າງຕັ້ງ;
2. ຄັງປົກປ້ອງເງິນຝາກ;
3. ຄັງສຳຮອງທົ່ວໄປ;
4. ຄັງຂະຫຍາຍການຜະລິດ;
5. ຄັງອື່ນ.

### ມາດຕາ 45 ທຶນສ້າງຕັ້ງ

ທຶນສ້າງຕັ້ງສຳນັກງານປົກປ້ອງເງິນຝາກ ແມ່ນ ທຶນທີ່ໄດ້ມາຈາກ ລັດປະກອບໃຫ້, ຜົນໄດ້ຮັບສຸດທິປະຈຳປີໃນການບໍລິຫານທຶນສ້າງຕັ້ງ ແລະ ການປະກອບສ່ວນຂອງພາກສ່ວນອື່ນ.

ທຶນສ້າງຕັ້ງ ສາມາດນຳໃຊ້ເຂົ້າໃນການກໍ່ສ້າງໂຄງລ່າງພື້ນຖານ, ສຳນັກງານ, ຫ້ອງການ ແລະ ປະກອບວັດຖຸເຕັກນິກ.

### ມາດຕາ 46 ຄັງປົກປ້ອງເງິນຝາກ

ຄັງປົກປ້ອງເງິນຝາກ ແມ່ນ ຄັງທີ່ໄດ້ມາຈາກການມອບເບ້ຍປະກັນເງິນຝາກຂອງສະມາຊິກ, ຜົນໄດ້ຮັບສຸດທິປະຈຳປີໃນການບໍລິຫານທຶນສ້າງຕັ້ງ ແລະ ຄັງປົກປ້ອງເງິນຝາກ, ເງິນປົກປ້ອງທີ່ຜູ້ຝາກເງິນ ບໍ່ມາສະເໜີຮັບເອົາຕາມກຳນົດເວລາ, ເງິນໄດ້ຮັບຄືນຈາກການແກ້ໄຂບັນຫາຂອງສະມາຊິກ, ເງິນຈາກການຮຽກເກັບຄືນຊັບສິນ ໃນຂະບວນການຊຳລະສະສາງ, ການກູ້ຢືມ ແລະ ການປະກອບສ່ວນຂອງພາກສ່ວນອື່ນ.

ຄັງປົກປ້ອງເງິນຝາກ ສາມາດນຳໃຊ້ເຂົ້າໃນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ ໃນກໍລະນີສະມາຊິກໃດໜຶ່ງ ຫາກຕົກຢູ່ໃນສະພາວະລົ້ມລະລາຍ, ການແກ້ໄຂບັນຫາຂອງສະມາຊິກ ແລະ ຊຳລະຄືນຕົ້ນທຶນ ແລະ ດອກເບ້ຍ ເງິນກູ້ຢືມ.

ໃນກໍລະນີຄັງປົກປ້ອງເງິນຝາກ ຫຼຸດ ຫຼື ເກີນ ອັດຕາສ່ວນຄັງເປົ້າໝາຍ, ສຳນັກງານປົກປ້ອງເງິນຝາກ ຕ້ອງຄົ້ນຄວ້າການ ເພີ່ມ ຫຼື ຫຼຸດ ອັດຕາເບ້ຍປະກັນເງິນຝາກ ເພື່ອສະເໜີ ທຫລ ພິຈາລະນາ.

### ມາດຕາ 47 ຄັງສຳຮອງທົ່ວໄປ

ຄັງສຳຮອງທົ່ວໄປ ແມ່ນ ຄັງທີ່ສ້າງຂຶ້ນໄວ້ ເພື່ອທົດແທນຜົນໄດ້ຮັບສຸດທິປະຈຳປີເປັນລົບ ຈາກຜົນການດຳເນີນງານໃນປີຜ່ານມາ.

ຄັງສຳຮອງທົ່ວໄປ ສ້າງຂຶ້ນຈາກການຈັດສັນຜົນໄດ້ຮັບສຸດທິປະຈຳປີ ຈາກການບໍລິຫານທຶນສ້າງຕັ້ງ ແລະ ຄັງປົກປ້ອງເງິນຝາກ.

**ມາດຕາ 48 ຄັງຂະຫຍາຍການຜະລິດ**

ຄັງຂະຫຍາຍການຜະລິດ ແມ່ນຄັງທີ່ສະສົມໄວ້ ຊຶ່ງໄດ້ຈາກການຈັດສັນຜົນໄດ້ຮັບສຸດທິປະຈຳປີ ຈາກການບໍລິຫານທຶນສ້າງຕັ້ງ ແລະ ຄັງປົກປ້ອງເງິນຝາກ ເພື່ອເປັນແຫຼ່ງທຶນສຳລັບການກໍ່ສ້າງໂຄງລ່າງພື້ນຖານ ແລະ ປະກອບວັດຖຸເຕັກນິກ ເປັນຕົ້ນ ການກໍ່ສ້າງ ແລະ ປັບປຸງ ສຳນັກງານ, ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ, ພາຫະນະ, ອຸປະກອນຮັບໃຊ້ວຽກງານວິຊາສະເພາະ.

**ມາດຕາ 49 ຄັງອື່ນ**

ຄັງອື່ນ ແມ່ນ ຄັງທີ່ສະສົມໄວ້ ຊຶ່ງໄດ້ຈາກການຈັດສັນຜົນໄດ້ຮັບສຸດທິປະຈຳປີ ຈາກການບໍລິຫານທຶນສ້າງຕັ້ງ ແລະ ຄັງປົກປ້ອງເງິນຝາກ ເພື່ອແຮໄວ້ຮັບປະກັນຄວາມສ່ຽງ, ນຳໃຊ້ໃນເວລາເກີດເຫດສຸດວິໄສຕ່າງໆ ເປັນຕົ້ນ ໄພທຳມະຊາດ, ອັກຄີໄພ, ວິກິດການທາງດ້ານການເງິນ ແລະ ສາມາດນຳໃຊ້ໃນວຽກງານອື່ນ ຕາມການຕົກລົງເຫັນດີຂອງສະພາບໍລິຫານ.

**ມາດຕາ 50 ການບໍລິຫານ ທຶນສ້າງຕັ້ງ ແລະ ຄັງປົກປ້ອງເງິນຝາກ**

ສຳນັກງານປົກປ້ອງເງິນຝາກ ສາມາດບໍລິຫານ ທຶນສ້າງຕັ້ງ ແລະ ຄັງປົກປ້ອງເງິນຝາກ ໃນຊັບສິນທີ່ມີຄວາມສ່ຽງຕ່ຳ ເປັນຕົ້ນ ຊື້ພັນທະບັດຂອງລັດຖະບານ, ພັນທະບັດຂອງທະນາຄານກາງ.

ຜົນໄດ້ຮັບສຸດທິປະຈຳປີ ຈາກການບໍລິຫານທຶນສ້າງຕັ້ງ ສາມາດຈັດແບ່ງເຂົ້າທຶນສ້າງຕັ້ງ, ຄັງສຳຮອງທົ່ວໄປ, ຄັງຂະຫຍາຍການຜະລິດ ແລະ ຄັງອື່ນ ຕາມອັດຕາສ່ວນທີ່ສະພາບໍລິຫານ ກຳນົດ.

ຜົນໄດ້ຮັບສຸດທິປະຈຳປີ ຈາກການບໍລິຫານຄັງປົກປ້ອງເງິນຝາກ ສາມາດນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງສຳນັກງານປົກປ້ອງເງິນຝາກ ຕາມອັດຕາສ່ວນທີ່ສະພາບໍລິຫານ ກຳນົດ ແລະ ສ່ວນທີ່ເຫຼືອໃຫ້ມອບເຂົ້າຄັງປົກປ້ອງເງິນຝາກ.

**ມາດຕາ 51 ງົບປະມານ**

ງົບປະມານ ຂອງສຳນັກງານປົກປ້ອງເງິນຝາກ ແມ່ນ ການຄາດຄະເນແຜນລາຍຮັບ, ລາຍຈ່າຍ ແລະ ຜົນໄດ້ຮັບສຸດທິປະຈຳປີ ທີ່ໄດ້ຮັບການຮັບຮອງຈາກສະພາບໍລິຫານໃນແຕ່ລະປີ.

ປີງົບປະມານ ຂອງສຳນັກງານປົກປ້ອງເງິນຝາກ ໃຫ້ປະຕິບັດຕາມປີການບັນຊີ ທີ່ໄດ້ກຳນົດໄວ້ໃນມາດຕາ 56 ຂອງກົດໝາຍສະບັບນີ້.

**ມາດຕາ 52 ລາຍຮັບ**

ລາຍຮັບ ຂອງສຳນັກງານປົກປ້ອງເງິນຝາກ ປະກອບດ້ວຍ:

1. ດອກເບ້ຍ ແລະ ຜົນຕອບແທນຈາກການບໍລິຫານທຶນສ້າງຕັ້ງ ແລະ ຄັງປົກປ້ອງເງິນຝາກ;
2. ເງິນປັບໃໝ;
3. ເງິນຈາກການຂາຍຊັບສິນບັດຄິງທີ່;
4. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 53 ລາຍຈ່າຍ**

ລາຍຈ່າຍ ຂອງສຳນັກງານປົກປ້ອງເງິນຝາກ ປະກອບດ້ວຍ:

1. ຄ່າໃຊ້ຈ່າຍບໍລິຫານ;
2. ຄ່າສ້ອມແປງ;

3. ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າຊັບສິນ;

4. ຄ່າທຳນຽມ ແລະ ຄ່າບໍລິການ;

5. ດອກເບ້ຍ ແລະ ຄ່າໃຊ້ຈ່າຍໃນການກູ້ຢືມ;

6. ຄ່າໂຄສະນາ ແລະ ປະຊາສຳພັນ;

7. ລາຍຈ່າຍອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 54 ຜົນໄດ້ຮັບສຸດທິປະຈຳປີ**

ຜົນໄດ້ຮັບສຸດທິປະຈຳປີ ຂອງສຳນັກງານປົກປ້ອງເງິນຝາກ ແມ່ນ ສ່ວນຜິດດ່ຽງບວກ ຫຼື ລົບ ທີ່ໄດ້ມາຈາກລາຍຮັບລົບລາຍຈ່າຍໃນປີ. ໃນກໍລະນີຜົນໄດ້ຮັບສຸດທິປະຈຳປີເປັນບວກ ໃຫ້ຈັດແບ່ງເຂົ້າຄັງຕ່າງໆ ຕາມການກຳນົດຂອງສະພາບໍລິຫານ.

ໃນກໍລະນີຜົນໄດ້ຮັບສຸດທິປະຈຳປີເປັນລົບ ໃຫ້ໂອນເຂົ້າເປັນການຂາດທຶນສະສົມ ໃນປີຕໍ່ໄປ ເພື່ອລໍຖ້າການແກ້ໄຂ ໂດຍນຳໃຊ້ຄັງສຳຮອງທົ່ວໄປ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47 ຂອງກົດໝາຍສະບັບນີ້ ແລະ ຜົນໄດ້ຮັບສຸດທິປະຈຳປີເປັນບວກຂອງປີຕໍ່ໄປ ຕາມການຈັດແບ່ງຂອງສະພາບໍລິຫານ.

ຜົນໄດ້ຮັບສຸດທິປະຈຳປີ ຂອງສຳນັກງານປົກປ້ອງເງິນຝາກ ໄດ້ຮັບການຍົກເວັ້ນອາກອນ.

**ມາດຕາ 55 ການບັນຊີ**

ສຳນັກງານປົກປ້ອງເງິນຝາກ ປະຕິບັດຫຼັກການບັນຊີ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 56 ປີການບັນຊີ**

ປີການບັນຊີ ຂອງສຳນັກງານປົກປ້ອງເງິນຝາກ ເລີ່ມຕົ້ນໃນວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ ຂອງແຕ່ລະປີ.

**ມາດຕາ 57 ເອກະສານລາຍງານການເງິນ**

ສຳນັກງານປົກປ້ອງເງິນຝາກ ຕ້ອງສ້າງເອກະສານລາຍງານການເງິນ ຕາມແບບພິມ ແລະ ລະບຽບການທີ່ ທຫລ ກຳນົດ. ສຳນັກງານປົກປ້ອງເງິນຝາກ ຕ້ອງລາຍງານສະພາບການເຄື່ອນໄຫວ ແລະ ຖານະການເງິນຂອງຕົນ ໃຫ້ ທຫລ ເປັນປະຈຳເດືອນ, ໄຕມາດ ແລະ ປີ.

## ພາກທີ V
## ຂໍ້ຫ້າມ

**ມາດຕາ 58 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຂັດຂວາງ, ບໍ່ອຳນວຍຄວາມສະດວກ, ບໍ່ໃຫ້ການຮ່ວມມື ໃນການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ ແລະ ພະນັກງານ ຂອງສຳນັກງານປົກປ້ອງເງິນຝາກ;

2. ເອົາ ຊື່ ຫຼື ສັນຍາລັກ ຂອງສຳນັກງານປົກປ້ອງເງິນຝາກ ໄປນຳໃຊ້ ເພື່ອຫາຜົນປະໂຫຍດແກ່ຕົນ ແລະ ພັກພວກຂອງຕົນ;

3. ອ້າງຕົນວ່າເປັນຜູ້ຝາກເງິນ ຂອງສະມາຊິກທີ່ຕົກຢູ່ໃນສະພາວະລົ້ມລະລາຍ ຫຼື ສະຖາບັນການເງິນທີ່ລົ້ມລະລາຍ ໂດຍບໍ່ມີມູນຄວາມຈິງ;

4. ຮ້ອງຟ້ອງດ້ວຍຄວາມບໍ່ບໍລິສຸດໃຈ ແລະ ມີຈຸດປະສົງເພື່ອເຮັດໃຫ້ສະມາຊິກໃດໜຶ່ງ ໄດ້ຮັບຄວາມເສຍຫາຍ;

5. ໂຄສະນາ ເຜີຍແຜ່ ຫຼື ມີການກະທຳ ທີ່ເປັນການບິດເບືອນຂໍ້ມູນ ຫຼື ແຕະຕ້ອງເຖິງວຽກງານປົກປ້ອງເງິນຝາກ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 59 ຂໍ້ຫ້າມສຳລັບສະມາຊິກ ແລະ ພະນັກງານ**

ຫ້າມສະມາຊິກ ແລະ ພະນັກງານ ມີພຶດຕິກຳ ດັ່ງນີ້:

1. ບໍ່ຈ່າຍເບ້ຍປະກັນເງິນຝາກ ຫຼື ຈ່າຍບໍ່ຄົບຖ້ວນຕາມຈຳນວນ;

2. ບໍ່ລາຍງານຖານະການເງິນ ແລະ ຂໍ້ມູນເງິນຝາກ ໃຫ້ສຳນັກງານປົກປ້ອງເງິນຝາກ ຢ່າງເປັນປົກກະຕິ;

3. ເມີນເສີຍໃນການໂຄສະນາ, ສ້າງຄວາມຮັບຮູ້ ກ່ຽວກັບວຽກງານປົກປ້ອງເງິນຝາກ ໃຫ້ຜູ້ຝາກເງິນ;

4. ປອມແປງເອກະສານ ກ່ຽວກັບວຽກງານປົກປ້ອງເງິນຝາກ ທີ່ສ້າງຄວາມເສຍຫາຍຕໍ່ສິດ ແລະ ຜົນປະໂຫຍດຂອງຜູ້ຝາກເງິນ ແລະ ສຳນັກງານປົກປ້ອງເງິນຝາກ;

5. ເຊື່ອງອຳເອກະສານບັນຊີ, ເຊື່ອງອຳຊັບສິນ, ຍົກຍ້າຍ, ໂອນ ຊັບສິນ, ເພີ່ມໜີ້ສິນໂດຍບໍ່ຖືກຕ້ອງ, ລຶບລ້າງ ຫຼື ຫຼຸດຜ່ອນສິດທວງໜີ້ຕ້ອງຮັບ ຂອງວິສາຫະກິດລູກໜີ້;

6. ໂຄສະນາ ຫຼື ສະໜອງຂໍ້ມູນ ກ່ຽວກັບວຽກງານປົກປ້ອງເງິນຝາກ ທີ່ບໍ່ຖືກຕ້ອງ ຫຼື ເກີນຄວາມເປັນຈິງ ຕໍ່ມວນຊົນ;

7. ຂັດຂວາງ, ບໍ່ອຳນວຍຄວາມສະດວກ ຫຼື ບໍ່ໃຫ້ການຮ່ວມມື ໃນການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ແລະ ພະນັກງານ ຂອງພາກສ່ວນທີ່ກ່ຽວຂ້ອງ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 60 ຂໍ້ຫ້າມສຳລັບຜູ້ຝາກເງິນ**

ຫ້າມຜູ້ຝາກເງິນ ມີພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກກີດຂວາງ, ແຊກແຊງວຽກງານ ຂອງສຳນັກງານປົກປ້ອງເງິນຝາກ ໃນເວລາເຄື່ອນໄຫວວຽກງານປົກປ້ອງເງິນຝາກ;

2. ປອມແປງເອກະສານກ່ຽວກັບເງິນຝາກຂອງຕົນ ໃນເວລາມາຮັບເງິນປົກປ້ອງ;

3. ໂຄສະນາ ເຜີຍແຜ່ ກ່ຽວກັບວຽກງານປົກປ້ອງເງິນຝາກ ທີ່ບໍ່ຖືກຕ້ອງ ຫຼື ເກີນຄວາມເປັນຈິງ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 61 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ຊື້ຊັບສິນຂອງສະມາຊິກທີ່ລົ້ມລະລາຍ ດ້ວຍຮູບການໃດໆ;

2. ນຳໃຊ້ທຶນ ຂອງສຳນັກງານປົກປ້ອງເງິນຝາກ ໂດຍບໍ່ສອດຄ່ອງກັບກົດໝາຍ;

3. ດຳເນີນທຸລະກິດ, ເປັນທີ່ປຶກສາ, ເປັນພະນັກງານຂອງສະມາຊິກ ທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;

4. ເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງຂອງສະມາຊິກ ຍົກເວັ້ນການປະຕິບັດຕາມກົດໝາຍ;

5. ຮັບ, ທວງເອົາ, ຂໍເອົາ ສິນບົນ, ເລືອກປະຕິບັດ, ກົດໜ່ວງຖ່ວງດຶງ, ສົມຮູ້ຮ່ວມຄິດ, ປອມແປງເອກະສານ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ພັກພວກຂອງຕົນ ກ່ຽວກັບການເຄື່ອນໄຫວວຽກງານ ຂອງສຳນັກງານປົກປ້ອງເງິນຝາກ;

6. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VI
## ການຄຸ້ມຄອງ ແລະ ການກວດກາວຽກງານປົກປ້ອງເງິນຝາກ
### ໝວດທີ 1
### ການຄຸ້ມຄອງວຽກງານປົກປ້ອງເງິນຝາກ

**ມາດຕາ 62 ອົງການຄຸ້ມຄອງ**

ລັດຖະບານ ຄຸ້ມຄອງວຽກງານປົກປ້ອງເງິນຝາກ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ທຫລ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງການເງິນ, ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 63 ສິດ ແລະ ໜ້າທີ່ ຂອງທະນາຄານແຫ່ງ ສປປ ລາວ**

ໃນການຄຸ້ມຄອງວຽກງານປົກປ້ອງເງິນຝາກ ທຫລ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງເອົານະໂຍບາຍລວມ ກ່ຽວກັບວຽກງານປົກປ້ອງເງິນຝາກ;

2. ອອກ ຫຼື ຍົກເລີກ ນິຕິກຳກ່ຽວກັບວຽກງານປົກປ້ອງເງິນຝາກ;

3. ຄົ້ນຄວ້າອະນຸມັດການຊື້ຄືນພັນທະບັດລັດຖະບານ ທີ່ສຳນັກງານປົກປ້ອງເງິນຝາກ ຖືຄອງ ຈາກການຊື້ຜ່ານຕະຫຼາດຫຼັກຊັບ ໃນກໍລະນີມີການຈ່າຍເງິນປົກປ້ອງ;

4. ກຳນົດສະຖາບັນການເງິນອື່ນ ທີ່ຮັບເງິນຝາກ ທີ່ສ້າງຕັ້ງຂຶ້ນ ຢ່າງຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ ເຂົ້າເປັນສະມາຊິກສຳນັກງານປົກປ້ອງເງິນຝາກ;

5. ໃຫ້ກູ້ຢືມແກ່ສຳນັກງານປົກປ້ອງເງິນຝາກ ໃນກໍລະນີທຶນຂອງສຳນັກງານປົກປ້ອງເງິນຝາກບໍ່ພຽງພໍໃນການຈ່າຍເງິນປົກປ້ອງ;

6. ສະເໜີນາຍົກລັດຖະມົນຕີ ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ສະພາບໍລິຫານ ແລະ ຫົວໜ້າສຳນັກງານປົກປ້ອງເງິນຝາກ;

7. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຮອງຫົວໜ້າສຳນັກງານປົກປ້ອງເງິນຝາກ ຕາມການສະເໜີຂອງສະພາບໍລິຫານ;

8. ແລກປ່ຽນຂໍ້ມູນ ຂ່າວສານ ກັບສຳນັກງານປົກປ້ອງເງິນຝາກ ໃນການຈັດຕັ້ງປະຕິບັດວຽກງານປົກປ້ອງເງິນຝາກ;

9. ທວງເອົາຂໍ້ມູນ ຫຼື ເອກະສານ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສຳນັກງານປົກປ້ອງເງິນຝາກ;

10. ຕິດຕາມ ກວດກາ ການເຄື່ອນໄຫວວຽກງານ ຂອງສຳນັກງານປົກປ້ອງເງິນຝາກ;

11. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ.

**ມາດຕາ 64 ສິດ ແລະ ໜ້າທີ່ ຂອງກະຊວງການເງິນ**

ໃນການຄຸ້ມຄອງວຽກງານປົກປ້ອງເງິນຝາກ ກະຊວງການເງິນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສະໜັບສະໜູນທຶນສຳຮອງ (Back-up Funding) ໃຫ້ສຳນັກງານປົກປ້ອງເງິນຝາກ ໃນກໍລະນີຄັງປົກປ້ອງເງິນຝາກບໍ່ພຽງພໍ ໃນການຈ່າຍເງິນປົກປ້ອງ ແລະ ຕິດຕາມການນຳໃຊ້ທຶນດັ່ງກ່າວ;

2. ຄ້ຳປະກັນການກູ້ຢືມເງິນຈາກ ສະຖາບັນການເງິນ ທັງພາຍໃນ ແລະ ຕ່າງປະເທດ ຕາມການສະເໜີຂອງ ທຫລ;

3. ແລກປ່ຽນຂໍ້ມູນ ຂ່າວສານ ກັບສຳນັກງານປົກປ້ອງເງິນຝາກ ໃນການຈັດຕັ້ງປະຕິບັດວຽກງານປົກປ້ອງເງິນຝາກ;

4. ທວງເອົາຂໍ້ມູນ ຫຼື ເອກະສານ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສຳນັກງານປົກປ້ອງເງິນຝາກ;

5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ.

**ມາດຕາ 65 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ໃຫ້ການຮ່ວມມື ແລະ ປະສານສົມທົບກັບ ທຫລ ໃນການຄຸ້ມຄອງວຽກງານປົກປ້ອງເງິນຝາກ ຕາມຂອບເຂດຄວາມຮັບຜິດຊອບ ແລະ ພາລະບົດບາດຂອງຕົນ.

## ໝວດທີ 2
## ການກວດກາວຽກງານປົກປ້ອງເງິນຝາກ

**ມາດຕາ 66 ອົງການກວດກາ**

ອົງການກວດກາວຽກງານປົກປ້ອງເງິນຝາກ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ຄະນະກຳມະການກວດກາ ຂອງສຳນັກງານປົກປ້ອງເງິນຝາກ ແລະ ກົມກວດກາ ຂອງ ທຫລ;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ.

**ມາດຕາ 67 ເນື້ອໃນການກວດກາ**

ການກວດກາວຽກງານປົກປ້ອງເງິນຝາກ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການປົກປ້ອງເງິນຝາກ;

2. ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສຳນັກງານປົກປ້ອງເງິນຝາກ;

3. ເອກະສານລາຍງານການເງິນ;

4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

### ມາດຕາ 68 ຮູບການກວດກາ

ການກວດກາວຽກງານປົກປ້ອງເງິນຝາກ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການ ແລະ ມີການກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໃນເວລາທີ່ມີຄວາມຈຳເປັນ ແລະ ຮີບດ່ວນໂດຍບໍ່ມີການແຈ້ງໃຫ້ສຳນັກງານປົກປ້ອງເງິນຝາກຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາວຽກງານປົກປ້ອງເງິນຝາກນັ້ນ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ VII
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 69 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 70 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງກັບການປົກປ້ອງເງິນຝາກ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

### ມາດຕາ 71 ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວກັບການປົກປ້ອງເງິນຝາກ ຈະຖືກປັບໃໝຕາມແຕ່ລະກໍລະນີ.

ສະມາຊິກ ທີ່ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 59 ຂໍ້ 1 ຂອງກົດໝາຍສະບັບນີ້ ຈະຖືກປັບໃໝ 0,05% ຕໍ່ວັນ ຂອງຈຳນວນເງິນຄ້າງຈ່າຍ ພາຍຫຼັງ ຫ້າວັນ ລັດຖະການ ນັບແຕ່ວັນທີ່ໄດ້ກ່າວເຕືອນຢ່າງເປັນລາຍລັກອັກສອນແລ້ວ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 72 ເຄື່ອງໝາຍ ແລະ ຕາປະທັບ**

ສຳນັກງານປົກປ້ອງເງິນຝາກ ມີເຄື່ອງໝາຍ ແລະ ຕາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານລັດຖະການ.

**ມາດຕາ 73 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 74 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ..................... ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ